ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0870 / ກປ

ນະຄອນຫຼວງວຽງຈັນ, ວັນທີ 18 MAR 2011

# ຂໍ້ຕົກລົງ
# ຂອງລັດຖະມົນຕີ
# ວ່າດ້ວຍການຂ້າສັດ ແລະ ການກວດກາອະນາໄມຜະລິດຕະພັນສັດ

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມໜັງສືສະເໜີຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0271/ກລປ, ລົງວັນທີ 28 ກຸມພາ 2011.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການຂ້າສັດ ແລະ ການກວດກາອະນາໄມຜະລິດຕະພັນສັດ ເພື່ອຮັບປະກັນຄວາມປອດໄພດ້ານສຸຂະພາບຂອງຜູ້ຂ້າສັດ, ຜູ້ຄ້າ, ຜູ້ປຸງແຕ່ງ, ຜູ້ບໍລິໂພກ ແລະ ຈຳກັດການແຜ່ລະບາດຂອງພະຍາດສັດ ພ້ອມທັງຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສັງຄົມ ແລະ ສະພາບແວດລ້ອມ.

**ມາດຕາ 2. ການຂ້າສັດ**

ການຂ້າສັດ ແມ່ນການນຳໃຊ້ວິທີການທາງວັດຖຸ ຫຼື ທາງເຄມີ ເພື່ອເຮັດໃຫ້ສັດຕາຍແບບບໍ່ທໍລະມານໂດຍເຮັດໃຫ້ສັດສະຫຼົບ ຫຼື ຕາຍຢ່າງກະທັນຫັນ. ການຂ້າສັດໃນຂໍ້ຕົກລົງສະບັບນີ້ ແມ່ນແນໃສ່ຂ້າສັດເພື່ອເອົາຊີ້ນ ແລະ ຜະລິດຕະພັນສັດເພື່ອການປຸງແຕ່ງ, ບໍລິໂພກ, ຈຳໜ່າຍ ຫຼື ຂ້າສັດເພື່ອຄວບຄຸມພະຍາດລະບາດໃນຂົງເຂດທີ່ກຳນົດໃດໜຶ່ງ.

**ມາດຕາ 3. ການກວດກາອະນາໄມຜະລິດຕະພັນສັດ**

ການກວດກາອະນາໄມຜະລິດຕະພັນສັດ ແມ່ນການກວດສະພາບຂອງສັດທາງດ້ານວິຊາການທັງກ່ອນ ແລະ ຫຼັງຂ້າເຊັ່ນ: ການກວດກາກ່ອນຂ້າແມ່ນການກວດເອກະສານ ແລະ ສະພາບຄວາມສົມບູນຂອງຮ່າງກາຍສັດ, ສ່ວນການກວດກາຫຼັງຂ້າແມ່ນການກວດກາຊີ້ນ ແລະ ອະໄວຍະວະຂອງ 3 ພາກສ່ວນ ຄື: ຫົວ, ຊາກ ແລະ ເຄື່ອງໃນ. ການກວດກາທັງໝົດນັ້ນແມ່ນເພື່ອຮັບປະກັນຄວາມປອດໄພດ້ານອາຫານໃຫ້ແກ່ຜູ້ບໍລິໂພກບໍ່ໃຫ້ຕິດພະຍາດສັດ ຫຼື ສານປົນເປື້ອນທີ່ເປັນອັນຕະລາຍຕໍ່ຮ່າງກາຍຂອງຄົນ, ສັດ ແລະ ສະພາບແວດລ້ອມ.

**ມາດຕາ 4. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ໂຮງງານຂ້າສັດ** ໝາຍເຖິງສະຖານທີ່ທີ່ມີການກໍ່ສ້າງຖືກຕ້ອງຕາມເຕັກນິກ ແລະ ປະກອບດ້ວຍເຄື່ອງມືອຸປະກອນທີ່ເໝາະສົມເພື່ອດຳເນີນການຂ້າສັດ;
2. **ໂຮງງານຂ້າສັດຂະໜາດໃຫຍ່** ໝາຍເຖິງໂຮງງານຂ້າສັດທີ່ມີການຂ້າສັດປະເພດງົວ, ຄວາຍ ແລະ ໝູ ຕັ້ງແຕ່ 61 ໂຕຂຶ້ນໄປ ຕໍ່ຄັ້ງ; ແກະ, ແບ້ 71 ໂຕຕໍ່ຄັ້ງ ແລະ ສັດປີກ 501 ໂຕຕໍ່ຄັ້ງ;
3. **ໂຮງງານຂ້າສັດຂະໜາດກາງ** ໝາຍເຖິງໂຮງງານຂ້າສັດທີ່ມີການຂ້າສັດປະເພດງົວ, ຄວາຍ ແລະ ໝູ ຕັ້ງແຕ່ 21 ຫາ 60 ໂຕ ຕໍ່ຄັ້ງ; ແກະ, ແບ້ 31 ຫາ 70 ໂຕຕໍ່ຄັ້ງ ແລະ ສັດປີກ 51 ຫາ 500 ໂຕຕໍ່ຄັ້ງ;
4. **ໂຮງງານຂ້າສັດຂະໜາດນ້ອຍ** ໝາຍເຖິງໂຮງງານຂ້າສັດທີ່ມີການຂ້າສັດປະເພດງົວ, ຄວາຍ ແລະ ໝູ ຕັ້ງແຕ່ 5 ຫາ 20 ໂຕ ຕໍ່ຄັ້ງ; ແກະ, ແບ້ 9 ຫາ 30 ໂຕຕໍ່ຄັ້ງ ແລະ ສັດປີກ 51 ຫາ 100 ໂຕຕໍ່ຄັ້ງ;
5. **ບ່ອນຂ້າສັດຍ່ອຍ** ໝາຍເຖິງສະຖານທີ່ທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ສັດຕະວະແພດໃຫ້ດຳເນີນການຂ້າສັດປະເພດງົວ, ຄວາຍ ແລະ ໝູ ຕັ້ງແຕ່ 1 ຫາ 4ໂຕ ຕໍ່ຄັ້ງ; ແກະ, ແບ້ 1 ຫາ 8 ໂຕຕໍ່ຄັ້ງ ແລະ ສັດປີກຕໍ່າກ່ວາ 50 ໂຕ ຕໍ່ຄັ້ງ;
6. **ສັດປ້ອນໂຮງງານຂ້າສັດ** ໝາຍເຖິງສັດຕາມທີ່ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດກຳນົດທີ່ຖືກນຳເອົາມາຂ້າຢູ່ໂຮງງານຂ້າສັດ ໂດຍຢູ່ພາຍໃຕ້ການກວດກາ ແລະ ຄຸ້ມຄອງຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
7. **ພະຍາດສັດທີ່ຈຳເປັນຕ້ອງແຈ້ງ** ໝາຍເຖິງພະຍາດລະບາດສັດຕາມທີ່ກົດໝາຍກຳນົດທີ່ມີຄວາມອັນຕະລາຍຮ້າຍແຮງ, ສາມາດຕິດຕໍ່ຈາກສັດຫາສັດ ຫຼື ຈາກສັດໄປຫາຄົນ, ແຜ່ລາມໄວຈາກເຂດໜຶ່ງໄປຫາອີກເຂດໜຶ່ງ ຫຼື ຈາກປະເທດໜຶ່ງໄປຫາອີກປະເທດໜຶ່ງ ຊຶ່ງມີຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ ຕົວຢ່າງເຊັ່ນ: ພະຍາດໄຂ້ຫວັດສັດປີກ, ປາກເປື່ອຍລົງເລັບ, ເຕົ້າໂຮມເລືອດງົວຄວາຍ, ໄຂ້ເລືອດດຳ, ອະຫິວາໝູ, ພະ

ຢາດວ້ ແລະ ພະຍາດອື່ນ;

8. **ຫຼັກການສຸຂານາໄມ** ໝາຍເຖິງມາດຕະການດ້ານວິຊາການ ໃຫ້ມີຄວາມສະອາດ ແລະ ປອດໄພດີໃນຂະບວນການລ້ຽງ, ການຂ້າ, ການຄິວ, ການປຸງແຕ່ງ, ການຫຸ້ມຫໍ່, ການເກັບຮັກສາ, ການຂົນສົ່ງ, ການຈຳໜ່າຍ ລວມທັງການບໍລິໂພກຊີ້ນສັດ ແລະ ຜະລິດຕະພັນສັດ ເພື່ອປ້ອງ ກັນສຸຂະພາບຂອງຄົນ, ສັດ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສະພາບແວດລ້ອມ;
9. **ພະນັກງານກວດກາອະນາໄມຜະລິດຕະພັນສັດ** ໝາຍເຖິງພະນັກງານສັດຕະວະແພດຂອງລັດ ທີ່ຖືກແຕ່ງຕັ້ງໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃຫ້ມີອຳນາດໜ້າທີ່ກ່ຽວກັບການກວດກາອະນາໄມຜະລິດຕະພັນສັດ ແລະ ຕ້ອງເປັນຜູ້ທີ່ມີຄວາມຮູ້ໂດຍໄດ້ຜ່ານການຝຶກອົບຮົມ ແລະ ມີໃບຢັ້ງຢືນດ້ານເຕັກນິກກ່ຽວກັບການກວດກາອະນາໄມຜະລິດຕະພັນສັດ ຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຢ່າງຖືກຕ້ອງ;
10. **ຜູ້ກວດກາອະນາໄມຜະລິດຕະພັນສັດ** ໝາຍເຖິງສັດຕະວະແພດ ຫຼື ວິຊາການສຸຂະພາບສັດທີ່ຖືກແຕ່ງຕັ້ງຈາກຫົວໜ້າຂອງໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ໂດຍໄດ້ຜ່ານຄວາມເຫັນດີ ຈາກອົງການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດ ໃຫ້ເຮັດໜ້າທີ່ກວດກາອະນາໄມຜະລິດຕະພັນສັດຢູ່ພາຍໃນໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ແລະ ຕ້ອງເປັນຜູ້ທີ່ມີຄວາມຮູ້ໂດຍໄດ້ຜ່ານການຝຶກອົບຮົມ ແລະ ມີໃບຢັ້ງຢືນດ້ານເຕັກນິກກ່ຽວກັບການກວດກາອະນາໄມຜະລິດຕະພັນສັດຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຢ່າງຖືກຕ້ອງ.

ມາດຕາ 5. **ການສົ່ງເສີມການຮ່ວມມື ແລະ ລົງທຶນ**

ກະຊວງກະສິກຳ ແລະ ປ່າໄມ້ ສົ່ງເສີມ, ເອື້ອອຳນວຍ ແລະ ສະໜອງຂໍ້ມູນຂ່າວສານໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງ ໃນການຮ່ວມມື ແລະ ລົງທຶນເພື່ອພັດທະນາກິດຈະການກ່ຽວກັບການຂ້າສັດ, ການກວດກາອະນາໄມຜະລິດຕະພັນສັດ, ການຫຸ້ມຫໍ່, ການປຸງແຕ່ງ, ການຂົນສົ່ງ, ການຈຳໜ່າຍສັດ ແລະ ຜະລິດຕະພັນສັດ ຕາມທິດທັນເປັນອຸດສາຫະກຳ, ທັນສະໄໝທີ່ໄດ້ມາດຕະຖານສຸຂານາໄມຂອງສາກົນ ເພື່ອໃຫ້ມີຄວາມປອດໄພຕໍ່ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ຕ້ອງຫຼີກເວັ້ນການສ້າງສິ່ງກີດຂວາງຕໍ່ການຄ້າ ທີ່ບໍ່ອີງໃສ່ຫຼັກການ ແລະ ພື້ນຖານດ້ານວິທະຍາສາດ.

ມາດຕາ 6. **ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບປະຕິບັດສຳລັບທຸກສຳນັກງານ, ອົງການຂອງລັດ, ກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ກຸ່ມລ້ຽງສັດ, ສະມາຄົມລ້ຽງສັດ, ສະຫະກອນ, ບຸກຄົນ ຫຼື ນິຕິບຸກຄົນທີ່ພົວພັນເຖິງການຂ້າສັດ, ການກວດກາອະນາໄມຜະລິດຕະພັນສັດ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການຈຳໜ່າຍຊີ້ນ ແລະ ຜະລິດຕະພັນສັດຢູ່ໃນດິນແດນ ສປປ ລາວ.

## ໝວດທີ 2
## ຂໍ້ກຳນົດພື້ນຖານກ່ຽວກັບມາດຕະການສຸຂານາໄມ ແລະ ສຸຂານາໄມພືດ (SPS)

**ມາດຕາ 7. ຂໍ້ກຳນົດພື້ນຖານກ່ຽວກັບມາດຕະການສຸຂານາໄມ ແລະ ສຸຂານາໄມພືດ (SPS)**

ການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ ຕ້ອງຮັບປະກັນໃຫ້ສອດຄ່ອງກັບຂໍ້ກຳນົດພື້ນຖານກ່ຽວກັບມາດຕະການດ້ານສຸຂານາໄມພືດ ແລະ ສັດ ດັ່ງນີ້:

1. ຕ້ອງມີຄວາມຈຳເປັນໃນການປົກປ້ອງສຸຂະພາບຂອງຄົນ ແລະ ສັດ;
2. ໃຫ້ອີງໃສ່ມາດຕະຖານແຫ່ງຊາດ;
3. ຮັບປະກັນຄວາມໂປ່ງໃສ;
4. ການບໍ່ຈຳແນກໃນການປະຕິບັດ;
5. ການປະເມີນຄວາມສ່ຽງ;
6. ການຮັບຮູ້ມາດຕະຖານຂອງຕ່າງປະເທດ.

**ມາດຕາ 8. ຄວາມຈຳເປັນໃນການປົກປ້ອງສຸຂະພາບຂອງຄົນ ແລະ ສັດ**

ໃນການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ ຕ້ອງຮັບປະກັນໃຫ້ມີຄວາມປອດໄພຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສະພາບແວດລ້ອມ ແລະ ຕ້ອງຫຼີກເວັ້ນການສ້າງສິ່ງກີດຂວາງຕໍ່ການຄ້າທີ່ບໍ່ອີງໃສ່ຫຼັກການ ແລະ ພື້ນຖານດ້ານວິທະຍາສາດ.

**ມາດຕາ 9. ມາດຕະຖານແຫ່ງຊາດ**

ການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ ຕ້ອງປະຕິບັດຕາມມາດຕະຖານທີ່ລັດຖະບານໄດ້ຮັບຮອງ ແລະ ປະກາດໃຊ້ຢ່າງເປັນເອກະພາບໃນທົ່ວປະເທດ, ພ້ອມທັງຮັບປະກັນຄວາມສອດຄ່ອງກັບມາດຕະຖານ, ຂໍ້ກຳນົດ ຫຼື ຄຳແນະນຳຂອງ ອົງການພະຍຸສັດສາກົນ (OIE) ກຳນົດອອກ.

ໃນກໍລະນີທີ່ມາດຕະຖານຂອງ ສປປ ລາວ ຫາກສູງກວ່າ ຫຼື ແຕກຕ່າງຈາກມາດຕະຖານ, ຂໍ້ກຳນົດ ຫຼື ຄຳແນະນຳຂອງອົງການພະຍຸສັດສາກົນ, ຕ້ອງມີການຊີ້ແຈງ ແລະ ອະທິບາຍບົນພື້ນຖານວິທະຍາສາດ.

**ມາດຕາ 10. ຮັບປະກັນຄວາມໂປ່ງໃສ**

ທຸກມາດຕະການ ຫຼື ວິທີການທີ່ນຳໃຊ້ເຂົ້າໃນການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດທີ່ຈະມີຜົນບັງຄັບໃຊ້ ຫຼື ມີການປ່ຽນແປງ ຕ້ອງມີການສະໜອງຮ່າງນິຕິກຳດັ່ງກ່າວໃຫ້ແກ່ພາກສ່ວນທີ່ສົນໃຈ ແລະ ກ່ຽວຂ້ອງ ພ້ອມກຳນົດຢ່າງໜ້ອຍ 60 ວັນເພື່ອການມີສ່ວນຮ່ວມ, ພາຍຫຼັງທີ່ມີການຮັບຮອງແລ້ວໃຫ້ເຜີຍແຜ່ນິຕິກຳດັ່ງກ່າວ 180 ວັນກ່ອນການບັງຄັບໃຊ້, ສາມາດເຜີຍແຜ່ຜ່ານສື່ມວນຊົນຢ່າງທັນການ ເພື່ອໃຫ້ຫນ່ວຍງານພາກລັດ, ເອກະຊົນ, ປະຊາຊົນ ຫຼື ຄູ່ຄ້າທີ່ກ່ຽວຂ້ອງມີເວລາກະກຽມໃນການຈັດຕັ້ງປະຕິບັດ, ໄລຍະເວລາຂອງການປະກອບຄຳເຫັນ ແລະ ເຜີຍແຜ່ດັ່ງກ່າວສາມາດຍົກເວັ້ນໄດ້ໃນກໍລະນີສຸກເສີນ.

ພາກສ່ວນທີ່ກ່ຽວຂ້ອງ ສາມາດແຈ້ງຂໍ້ມູນໄດ້ທຸກເວລາ ກ່ຽວກັບການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ ນັບທັງການນຳໃຊ້ມາດຕະການສຸຂານາໄມສັດໃຫ້ແກ່ສູນສະໜອງ (Enquiry Point) ແລະ ໜ່ວຍງານແຈ້ງການ (Notification Point) ຂໍ້ມູນດ້ານສຸຂານາໄມ ແລະ ສຸຂານາໄມພືດ ແລະ ຂໍ້ມູນກ່ຽວກັບສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ (SPS/TBT).

ທຸກມາດຕະການ, ແບບຟອມ, ຂັ້ນຕອນ, ໄລຍະເວລາ, ຄ່າທຳນຽມ ແລະ ຂໍ້ມູນອື່ນໆທີ່ຈຳເປັນແກ່ການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດຕ້ອງມີການເຜີຍແຜ່ ແລະ ແຈ້ງການຢ່າງເໝາະສົມ, ພ້ອມທັງຕິດປະກາດໄວ້ໃນສະຖານທີ່ບໍລິການທີ່ສະດວກໃນການຮັບຂ່າວສານໃຫ້ແກ່ຜູ້ປະກອບການ.

## ມາດຕາ 11. ການບໍ່ຈຳແນກໃນການປະຕິບັດ

ການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດຕ້ອງຮັບປະກັນຫຼັກການບໍ່ຈຳແນກໃນການປະຕິບັດ. ການກຳນົດລະບຽບຫຼັກການຕ້ອງໃຫ້ມີຄວາມສະເໝີພາບລະຫວ່າງປະເທດທີ່ເປັນຄູ່ຄ້າ ຫຼື ບັນດາຜູ້ດຳເນີນທຸລະກິດກ່ຽວກັບການລ້ຽງສັດ, ການຂ້າສັດ ແລະ ກວດກາຜະລິດຕະພັນສັດ, ຍົກເວັ້ນໃນກໍລະນີທີ່ຕ້ອງໄດ້ປະຕິບັດແບບແຕກຕ່າງ ສຳລັບຂົງເຂດ ຫຼື ປະເທດທີ່ມີພະຍາດສັດລະບາດ.

## ມາດຕາ 12. ການປະເມີນຄວາມສ່ຽງ

ໃນການຮັບປະກັນຄວາມປອດໄພຕໍ່ຊີວິດ ແລະ ສຸຂະພາບຂອງຄົນ, ສັດ ແລະ ພືດ, ໃນຂະບວນການການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ ຕ້ອງຮັບປະກັນໃຫ້ມີລະບົບປະເມີນຄວາມສ່ຽງທີ່ອີງໃສ່ຫຼັກການປະເມີນຄວາມສ່ຽງທີ່ໄດ້ພັດທະນາແລ້ວ ຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ, ການປະເມີນຄວາມສ່ຽງດັ່ງກ່າວຕ້ອງແນໃສ່ເພື່ອສ້າງ ຫຼື ກຳນົດມາດຕະການທີ່ຈະນຳໃຊ້ໃຫ້ບັນລຸເຖິງລະດັບທີ່ເໝາະສົມ ຂອງການປ້ອງກັນສຸຂານາໄມສັດ ຫຼື ພືດທີ່ອາດເກີດຈາກຄວາມສ່ຽງດັ່ງກ່າວນັ້ນ ໂດຍຕ້ອງຄຳນຶງເຖິງຜົນກະທົບດ້ານເສດຖະກິດທີ່ກ່ຽວຂ້ອງ. ພ້ອມນີ້, ການກຳນົດມາດຕະການທີ່ເໝາະສົມກໍ່ຕ້ອງ ໃຫ້ມີລັກສະນະເອກະພາບ, ບໍ່ເລືອກປະຕິບັດ, ຜົນກະທົບທາງລົບຕໍ່ການຄ້າໃຫ້ມີໜ້ອຍທີ່ສຸດ ແລະ ຫຼີກເວັ້ນການໃຊ້ມາດຕະການທີ່ບໍ່ໄດ້ລະບຸໄວ້ຢູ່ບົນພື້ນຖານມາດຕະຖານ, ທິດຊີ້ນຳ ຫຼື ຂໍ້ສະເໜີແນະນຳຂອງອົງການສາກົນທີ່ກ່ຽວຂ້ອງ ທີ່ເປັນຂໍ້ຈຳກັດ ຫຼື ສ້າງແນວໂນ້ມຈຳກັດການຄ້າສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດທັງຢູ່ພາຍໃນ ແລະ ລະຫວ່າງປະເທດ.

## ມາດຕາ 13. ການຮັບຮູ້ລະບຽບການ ແລະ ເຕັກນິກຂອງຕ່າງປະເທດ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂອງ ສປປລາວ ຮັບຮູ້ລະບຽບການເຕັກນິກການຂ້າ ແລະ ກວດກາອະນາໄມຜະລິດຕະພັນສັດຂອງປະເທດອື່ນທີ່ສາມາດບັນລຸໄດ້ຕາມຈຸດປະສົງ ແລະ ລະດັບຄາດໝາຍຂອງຂໍ້ຕົກລົງສະບັບນີ້.

ວິທີການຮັບຮູ້ລະບຽບການເຕັກນິກການຂ້າສັດ ແລະ ການກວດກາອະນາໄມຜະລິດຕະພັນສັດຂອງປະເທດອື່ນ ແມ່ນໃຫ້ປະຕິບັດຕາມຂັ້ນຕອນທີ່ກຳນົດໂດຍຄະນະກຳມະການທີ່ກ່ຽວ

ຂ້ອງຂອງອົງການການຄ້າໂລກ.

ສໍາລັບປະເທດທີ່ມີລະບຽບການເຕັກນິກທີ່ໄດ້ຮັບຮອງເອົາມາດຕະຖານ ຂອງອົງການພະຍຸສັດສາກົນ (OIE), ໃນການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດແມ່ນໃຫ້ຮັບຮູ້ແບບອັດຕະໂນມັດເລີຍ.

## ໝວດທີ 3
## ການສ້າງຕັ້ງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ

**ມາດຕາ 14. ການສ້າງຕັ້ງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຈະສ້າງຕັ້ງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍໃໝ່, ປັບປຸງຕໍ່ເຕີມ ຫຼື ຂະຫຍາຍກິດຈະການ, ຕ້ອງໄດ້ຮັບການເຫັນດີທາງດ້ານເຕັກນິກດ້ານສຸຂານາໄມໂຮງຂ້າສັດຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດເສຍກ່ອນ. ກະຊວງກະສິກໍາ ແລະ ປ່າໄມ້ ຈະເປັນຜູ້ອອກໃບຢັ້ງຢືນມາດຕະຖານດ້ານສຸຂານາໄມສໍາລັບໂຮງງານຂ້າສັດຂະໜາດກາງ ແລະ ຂະໜາດໃຫຍ່ ແລະ ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ, ນະຄອນ ຈະເປັນຜູ້ອອກໃບຢັ້ງຢືນໃຫ້ແກ່ໂຮງງານຂ້າສັດຂະໜາດນ້ອຍ ແລະ ບ່ອນຂ້າສັດຍ່ອຍ.

ການອອກໃບຢັ້ງຢືນດັ່ງກ່າວໃຫ້ໄດ້ ກໍຕໍ່ເມື່ອໄດ້ປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ຢ່າງຄົບຖ້ວນແລ້ວ ແລະ ໄດ້ຜ່ານການລົງກວດກາຕົວຈິງໂດຍຄະນະກໍາມະການຄວບຄຸມການສ້າງຕັ້ງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍແລ້ວ ແລະ ຄະນະກໍາມະການດັ່ງກ່າວ ຕ້ອງມີບົດລາຍງານເປັນລາຍລັກອັກສອນວ່າ ມີເງື່ອນໄຂຄົບຖ້ວນຕາມມາດຕະຖານດ້ານສຸຂານາໄມທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດກໍານົດອອກແລ້ວ ເທົ່ານັ້ນ. ໃບຢັ້ງຢືນມາດຕະຖານດ້ານສຸຂານາໄມ ຂອງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍນີ້ ມີກໍານົດເວລານໍາໃຊ້ໄດ້ 1 ປີ.

ການຂໍຢັ້ງຢືນດ້ານເຕັກນິກໃນການສ້າງຕັ້ງ ຫຼື ປັບປຸງໃໝ່ໃຫ້ປະຕິບັດ ດັ່ງນີ້:

1. ໂຮງງານຂ້າສັດຂະໜາດກາງ ແລະ ຂະໜາດໃຫຍ່ ຈະຕ້ອງຍື່ນຄໍາຮ້ອງຂໍການຢັ້ງຢືນດ້ານເຕັກນິກພ້ອມດ້ວຍເອກະສານກ່ຽວຂ້ອງຕາມລະບຽບກົດໝາຍຕໍ່ກະຊວງກະສິກໍາ ແລະ ປ່າໄມ້;
2. ໂຮງງານຂ້າສັດຂະໜາດນ້ອຍ ແລະ ບ່ອນຂ້າສັດຍ່ອຍ ຈະຕ້ອງຍື່ນຄໍາຮ້ອງຂໍການຢັ້ງຢືນດ້ານເຕັກນິກພ້ອມດ້ວຍເອກະສານກ່ຽວຂ້ອງຕາມລະບຽບກົດໝາຍ ຕໍ່ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ຫຼື ນະຄອນ;
3. ເອກະສານປະກອບ ເພື່ອຂໍສ້າງຕັ້ງໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍມີ ດັ່ງນີ້:
   - ໃບຄໍາຮ້ອງຂໍການຢັ້ງຢືນດ້ານເຕັກນິກໃນການສ້າງຕັ້ງ;
   - ຖ້າເປັນບຸກຄົນ ໃຫ້ມີບັດປະຈໍາຕົວ ຫຼື ສໍາມະໂນຄົວ;
   - ບົດສະເໜີໂຄງການ, ບົດວິພາກເສດຖະກິດ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ;

- ແຜນຜັງເຕັກນິກດ້ານການກໍ່ສ້າງ;
- ແຜນທີ່ສະແດງເຖິງບໍລິເວນ ທີ່ຈະນໍາໃຊ້ເຮັດໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ລວມທັງບໍລິເວນທີ່ອ້ອມຮອບ.

ການອະນຸມັດຢັ້ງຢືນມາດຕະຖານດ້ານເຕັກນິກສໍາລັບໂຮງງານຂ້າສັດປະເພດງົວ, ຄວາຍ, ໝູ, ແກະ, ແບ້ ແລະ ສັດປີກຂະໜາດກາງ ແລະ ຂະໜາດໃຫຍ່ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ທີ່ມີຈຸດປະສົງຂໍສ້າງຕັ້ງໂຮງຂ້າສັດຂະໜາດໃຫຍ່ ຕ້ອງຍື່ນຄໍາຮ້ອງ ແລະ ເອກະສານທັງໝົດຕໍ່ກະຊວງກະສິກໍາ ແລະ ປ່າໄມ້. ກົມລ້ຽງສັດ ແລະ ການປະມົງເປັນເສນາທິການໃຫ້ແກ່ກະຊວງຈະເປັນຜູ້ຄົ້ນຄວ້າແບບແຜນຜັງ ແລະ ລົງຄວາມເຫັນຮັບຮອງເອົາແບບເບື້ອງຕົ້ນເສຍກ່ອນ ຈາກນັ້ນຈຶ່ງສະເໜີໃຫ້ຂັ້ນເທິງອອກຂໍ້ຕົກລົງເຫັນດີແຈ້ງຕໍ່ຜູ້ຍື່ນຄໍາຮ້ອງໃຫ້ລົງມືກໍ່ສ້າງໄດ້ ຖ້າຫາກບໍ່ຂັດກັບລະບຽບຫຼັກການຂອງອົງການທີ່ກ່ຽວຂ້ອງອື່ນ;
2. ເມື່ອການກໍ່ສ້າງໄດ້ດໍາເນີນສໍາເລັດໄປແລ້ວຢູ່ລະຫວ່າງປະມານ 50-80% ຜູ້ປະກອບການຕ້ອງສະເໜີຕໍ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດເພື່ອລົງໄປກວດກາ ແນໃສ່ໃຫ້ການແນະນໍາທາງດ້ານວິຊາການເພີ່ມເຕີມ;
3. ເມື່ອການກໍ່ສ້າງສໍາເລັດ 100% ຜູ້ປະກອບການຕ້ອງແຈ້ງໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ພ້ອມກັບອົງການກ່ຽວຂ້ອງອື່ນລົງໄປກວດກາ ພ້ອມທັງດໍາເນີນການທົດລອງຂ້າສັດ ຫຼື ເດີນເຄື່ອງຈັກ ແລະ ເຮັດບົດບັນທຶກ. ຫາກພົບບາງອັນທີ່ຍັງບົກພ່ອງຜູ້ປະກອບການຕ້ອງປັບປຸງແກ້ໄຂໃຫ້ດີຖືກຕ້ອງສົມບູນຕື່ມອີກ;
4. ເມື່ອການປັບປຸງແກ້ໄຂຂັ້ນສຸດທ້າຍສໍາເລັດແລ້ວ, ຄະນະຮັບຜິດຊອບທີ່ກ່ຽວຂ້ອງຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ສັດຕະວະແພດຕ້ອງນໍາສະເໜີໃຫ້ແກ່ຂັ້ນເທິງ ເພື່ອອອກໃບຢັ້ງຢືນຢ່າງເປັນທາງການໃຫ້ແກ່ຜູ້ປະກອບການໂດຍທັນທີ. ໃນກໍລະນີຍັງມີບັນຫາໃດໜຶ່ງທີ່ເຫັນວ່າບໍ່ທັນສົມຄວນອອກໃບຢັ້ງຢືນໃຫ້ໄດ້ ຄະນະຮັບຜິດຊອບຕ້ອງເປັນເຈົ້າການເຮັດແຈ້ງການໃຫ້ແກ່ຜູ້ປະກອບການຮັບຊາບໂດຍດ່ວນ.

ການຂໍອະນຸມັດ ຢັ້ງຢືນມາດຕະຖານເຕັກນິກສໍາລັບໂຮງງານຂ້າສັດປະເພດງົວ, ຄວາຍ, ໝູ, ແກະ, ແບ້ ແລະ ສັດປີກຂະໜາດນ້ອຍ ແລະ ບ່ອນຂ້າສັດຍ່ອຍໃຫ້ປະຕິບັດຄືກັນກັບຂັ້ນຕອນການອະນຸມັດຢັ້ງຢືນດ້ານເຕັກນິກຂອງໂຮງງານຂ້າສັດຂະໜາດໃຫຍ່ ແຕ່ໃຫ້ປະຕິບັດຂໍການຢັ້ງຢືນມາດຕະຖານເຕັກນິກດ້ານສຸຂານາໄມນໍາພະແນກກະສິກໍາ ແລະ ປ່າໄມ້ເປັນຜູ້ພິຈາລະນາ, ຍົກເວັ້ນບ່ອນຂ້າສັດຍ່ອຍປະເພດສັດປີກ ແມ່ນໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ປະຈໍາເມືອງ, ເທດສະບານມີອໍານາດໃນການຢັ້ງຢືນດ້ານເຕັກກໍໄດ້. ການຢັ້ງຢືນດ້ານເຕັກນິກສຸຂານາໄມທຸກລະດັບ ຕ້ອງຜ່ານກວດກາຕົວຈິງຈາກຄະນະວິຊາການຮັບຜິດຊອບທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ສໍາລັບການຂໍອະນຸຍາດດໍາເນີນທຸລະກິດ ແລະ ການຢັ້ງຢືນມາດຕະຖານເຕັກນິກດ້ານການກໍ່ສ້າງຂອງໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍໃຫ້ປະຕິບັດຕາມລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 15. ມາດຕະຖານດ້ານສຸຂະນາໄມຂອງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ທຸກໆໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງປະຕິບັດຕາມມາດຕະຖານເຕັກນິກທີ່ກຳນົດໃນລະບຽບກົດໝາຍຂອງ ສປປ ລາວ ແລະ ຕ້ອງປະຕິບັດຕາມມາຕະຖານດ້ານສຸຂານາໄມຂອງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ສັດຕະວະແພດກຳນົດອອກຢ່າງເຂັ້ມງວດ.

ມອບໃຫ້ກົມລ້ຽງສັດ ແລະ ການປະມົງຄົ້ນຄວ້າ ແລະ ສ້າງມາດຕະຖານດ້ານສຸຂານາໄມຂອງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍອອກແລ້ວປະກາດໃຊ້ໃນຂອບເຂດທົ່ວປະເທດ ແນໃສ່ປັບປຸງ ແລະ ຍົກສູງຄຸນນະພາບຂອງຜະລິດຕະພັນສັດຂອງປະເທດລາວໃຫ້ໄດ້ມາດຖານຂອງຂົງເຂດ ແລະ ສາກົນ.

**ມາດຕາ 16. ການຖອນໃບຢັ້ງຢືນມາດຕະຖານດ້ານສຸຂານາໄມຂອງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນ ມີສິດຖອນໃບຢັ້ງຢືນມາດຕະຖານດ້ານສຸຂານາໄມ ແລະ ບໍ່ຕໍ່ອາຍຸໃບຢັ້ງຢືນໃຫ້ ຫຼື ສະເໜີໃຫ້ຍຸດເຊົາກິດຈະການຕໍ່ອົງການທີ່ມີອຳນາດອອກໃບທະບຽນທຸລະກິດໄດ້ ຖ້າຫາກຜູ້ດຳເນີນກິດຈະການບໍ່ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຜູ້ປະກອບການບໍ່ປັບປຸງພື້ນຖານວັດຖຸເຕັກນິກໃຫ້ໄດ້ຕາມມາດຕະຖານ ດ້ານສຸຂານາໄມຕາມທີ່ກຳນົດໄວ້ໃນລະບຽບການຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ສັດຕະວະແພດ ແລະ ບໍ່ປະຕິບັດຕາມການແນະນຳຂອງຄະນະກຳມະການກ່ຽວຂ້ອງ;
2. ຜູ້ປະກອບການບໍ່ສາມາດຮັກສາມາດຕະຖານ ດ້ານສຸຂານາໄມຕາມທີ່ກຳນົດໄວ້ໃນລະບຽບການຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
3. ປັບປຸງ ແລະ ຂະຫຍາຍກິດຈະການບໍ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
4. ບໍ່ໃຫ້ການຮ່ວມມື, ຂົ່ມຂູ່ ຫຼື ປະຕິເສດການກວດກາຂອງເຈົ້າໜ້າທີ່ສັດຕະວະແພດ ແລະ ພະນັກງານກວດກາອະນາໄມຜະລິດຕະພັນສັດ;
5. ການດຳເນີນງານຂອງໂຮງງານຂ້າສັດເຮັດໃຫ້ມີຜົນກະທົບຕໍ່ສະພາບແວດລ້ອມ ແລະ ສັງຄົມ.

## ໝວດທີ 4
## ການຂ້າສັດ ແລະ ການກວດກາອະນາໄມຜະລິດຕະພັນສັດ

**ມາດຕາ 17. ການກວດກາສັດກ່ອນຂ້າ**

ສັດທຸກໆໂຕກ່ອນທີ່ຈະນຳເຂົ້າຂ້າຕ້ອງໄດ້ຜ່ານການກວດກາສັດກ່ອນຂ້າ ໂດຍພະນັກງານ ຫຼື ຜູ້ກວດກາຜະລິດຕະພັນສັດ ແລະ ຕ້ອງລ້າງຕົນໂຕສັດດ້ວຍນ້ຳສະອາດເພື່ອໃຫ້ສິ່ງທີ່ເປື້ອນເປິະອອກເສຍກ່ອນ.

ການກວດກາສັດກ່ອນຂ້າແມ່ນການກວດກາ ດັ່ງນີ້:

1. ກວດກາປະຫວັດຂອງສັດ ໂດຍຈະຕ້ອງກວດເອກະສານໃບອະນຸຍາດເຄື່ອນຍ້າຍສັດ, ໃບທະບຽນພິມສັດ, ໃບຢັ້ງຢືນສຸຂະພາບ ແລະ ໃບຢັ້ງຢືນການສັກຢາກັນພະຍາດສັດ;
2. ກວດກາສຸຂະພາບ ແລະ ຄວາມສົມບູນຂອງຮ່າງກາຍສັດ ໂດຍການສັງເກດອາການຂອງສັດ ນັບທັງການວັດແທກອຸນຫະພູມຂອງຮ່າງກາຍສັດ.

**ມາດຕາ 18. ການຂ້າສັດໃນໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ສັດທີ່ຈະນໍາເຂົ້າຂ້າໃນໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. ສັດທີ່ຖືກນໍາເຂົ້າໄປບ່ອນຂ້າແລ້ວ ຕ້ອງຂ້າໂດຍໄວເທົ່າທີ່ຈະໄວໄດ້;
2. ການຂ້າສັດຕ້ອງປະຕິບັດຕາມຫລັກວິຊາການ ໂດຍບໍ່ຄວນຂ້າດ້ວຍວິທີທີ່ທໍລະມານສັດຈົນເກີນໄປ ເຊັ່ນ: ໃຊ້ຄ້ອນທຸບຫົວຫຼາຍໆບາດ, ໃຊ້ຂວານສັບຕັດເອັນຂະນ່ອງສັດໃນຂະນະທີ່ສັດບໍ່ທັນສະຫຼົບ ຫຼືການເຈາະເອົາເລືອດອອກໃນຂະນະທີ່ສັດບໍ່ທັນສະຫຼົບ ການຂ້າທີ່ຖືກຕ້ອງຄວນໃຊ້ປືນສໍາລັບຂ້າສັດ ຫຼື ຊ໊ອດດ້ວຍໄຟຟ້າໃຫ້ສັດສະຫຼົບແລ້ວຈຶ່ງເຈາະເອົາເລືອດອອກໃຫ້ໝົດ.

**ມາດຕາ 19. ການຂ້າສັດໃນບ່ອນບໍລິການປີ້ງ ຫຼື ປິ່ນສັດ**

ການຂ້າສັດຂອງຮ້ານບໍລິການຕ່າງໆ ເຊັ່ນ: ຮ້ານປິ່ນງົວ, ຮ້ານປິ່ນໝູ, ຮ້ານງົວເຜົາ, ຮ້ານປີ້ງແບ້ ແລະ ຮ້ານປີ້ງສັດອື່ນໆ ນັບທັງການປີ້ງໄກ່ ຫຼື ຮ້ານເລືອດແປງເປັດທີ່ມີຈຸດປະສົງເຮັດອາຫານເພື່ອຈໍາໜ່າຍບໍລິການໃຫ້ແກ່ມວນຊົນຢ່າງກວ້າງຂວາງ ຕ້ອງໄດ້ຮັບການກວດກາຈາກພະນັກງານກວດກາອະນາໄມຜະລິດຕະພັນສັດ ແລະ ປະຕິບັດຕາມລະບຽບຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ.

ສະຖານທີ່ທີ່ໃຊ້ເປັນບ່ອນຂ້າ, ຄົວສັດ ຕ້ອງປະຕິບັດຕາມຫຼັກການສຸຂານາໄມທີ່ໄດ້ກໍານົດໄວ້ຢ່າງເຄັ່ງຄັດ ແລະ ບໍ່ອະນຸບາດໃຫ້ເອົາຜະລິດຕະພັນສັດດັ່ງກ່າວໄປຈໍາໜ່າຍໃນທ້ອງຕະຫຼາດ.

**ມາດຕາ 20. ການຂ້າສັດເພື່ອບໍລິໂພກພາຍໃນຄອບຄົວ ແລະ ບຸນປະເພນີ**

ການຂ້າສັດປະເພດງົວ, ຄວາຍ, ໝູ ເພື່ອບໍລິໂພກພາຍໃນຄອບຄົວ ແລະ ບຸນປະເພນີຢູ່ຕາມບ້ານເຮືອນ ເຊັ່ນ: ງານກິນລ້ຽງ, ກິນດອງ, ກິນຮີດເປັນຕົ້ນ ຕ້ອງໄດ້ຮັບອະນຸຍາດຈາກນາຍບ້ານເສຍກ່ອນ, ສັດທີ່ຈະນໍາມາບໍລິໂພກຕ້ອງມີສຸຂະພາບແຂງແຮງດີ ແລະ ໄດ້ຮັບການກວດກາຈາກສັດຕະວະແພດບ້ານ ແລະ ບໍ່ອະນຸຍາດໃຫ້ເອົາຜະລິດຕະພັນສັດດັ່ງກ່າວໄປຈໍາໜ່າຍ.

**ມາດຕາ 21. ການພົບສັດຖືພາມານ**

ໃນເວລາກວດກາກ່ອນຂ້າຫາກພົບວ່າສັດປະເພດງົວ, ຄວາຍ, ໝູ, ແກະ, ແບ້ ກໍາລັງຖືພາມານ ພະນັກງານ ຫຼື ຜູ້ກວດກາອະນາໄມຜະລິດຕະພັນສັດ ຕ້ອງໂຈະການຂ້າ ແລະ ສົ່ງສັດດັ່ງກ່າວຄືນໃຫ້ເຈົ້າຂອງພ້ອມທັງແນະນໍາຕັກເຕືອນສຶກສາອົບຮົມ ຫຼືປັບໃໝຕາມສະຖານໜັກ ຫຼື ເບົາແລ້ວແຕ່ກໍລະນີ.

## ມາດຕາ 22. ການພົບເຫັນອາການຜິດປົກກະຕິ ຂອງສັດໃນເວລາທີ່ຈະນຳເຂົ້າຂ້າ

ຖ້າພົບເຫັນວ່າສັດທີ່ຈະປ້ອນໂຮງງານຂ້າສັດ ສະແດງອາການຜິດປົກກະຕິໃນຂະນະທີ່ທຳການກວດກາກ່ອນຂ້າ ເຊັ່ນ: ງົວ, ຄວາຍ ມີອຸນຫະພູມສູງເກີນກວ່າ 40 ອົງສາເຊ ແລະ ໝູ ເກີນກວ່າ 41 ອົງສາເຊ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າຂ້າ, ພະນັກງານກວດກາອະນາໄມຜະລິດຕະພັນສັດສາມາດກັກສັດນັ້ນໄວ້ໃນສະຖານທີ່ກັກສັດຂອງໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ເພື່ອຊອກຫາສາເຫດ ແລະ ປິ່ນປົວ. ສັດດັ່ງກ່າວຈະສາມາດອະນຸຍາດໃຫ້ນຳເຂົ້າຂ້າໄດ້ກໍຕໍ່ເມື່ອພະນັກງານກວດກາອະນາໄມຜະລິດຕະພັນສັດໄດ້ກວດພົບແລ້ວວ່າ ສັດນັ້ນໄດ້ປິ່ນປົວຫາຍດີເປັນປົກກະຕິແລ້ວ, ແຕ່ຕ້ອງບໍ່ໃຫ້ຕ່ຳກວ່າ 14 ວັນ ເພື່ອໃຫ້ແນ່ໃຈວ່າສັດດັ່ງກ່າວບໍ່ມີສານຢາຕົກຄ້າງ ແລະ ປອດໄພຕໍ່ຜູ້ບໍລິໂພກ.

## ມາດຕາ 23. ການພົບພະຍາດຈຳເປັນຕ້ອງແຈ້ງກ່ອນຂ້າ

ສັດທຸກໂຕທີ່ສະແດງອາການຊັດເຈນວ່າເປັນພະຍາດທີ່ຈຳເປັນຕ້ອງແຈ້ງ ຫຼື ໄດ້ຮັບການບົ່ງມະຕິ, ຢັ້ງຢືນຈາກຫ້ອງວິໄຈວ່າ ສັດນັ້ນໄດ້ຕິດເຊື້ອພະຍາດໃດໜຶ່ງທີ່ຈຳເປັນຕ້ອງແຈ້ງ, ຕ້ອງທຳການຂ້າສັດນັ້ນຢູ່ພາຍໃຕ້ການຄວບຄຸມກວດກາຂອງເຈົ້າໜ້າທີ່ສັດຕະວະແພດ ຢ່າງເຄັ່ງຄັດ. ນອກຈາກນີ້ສະຖານທີ່ທີ່ສັດດັ່ງກ່າວອາໄສຢູ່ ກໍຕ້ອງທຳການອະນາໄມຂ້າເຊື້ອດ້ວຍຢາຂ້າເຊື້ອທີ່ມີປະສິດທິພາບສູງ.

## ມາດຕາ 24. ການກວດກາສັດຫຼັງຂ້າ

ສັດທຸກໂຕພາຍຫຼັງທີ່ຂ້າແລ້ວ, ຊີ້ນ ແລະ ຜະລິດຕະພັນສັດທຸກຢ່າງຕ້ອງໄດ້ຜ່ານຂັ້ນຕອນການກວດກາສັດຫຼັງຂ້າ ໂດຍພະນັກງານ ຫຼື ຜູ້ກວດກາອະນາໄມຜະລິດຕະພັນສັດຢ່າງເຂັ້ມງວດ.

ສຳລັບຂັ້ນຕອນວິທີການກວດກາລະອຽດ ໃຫ້ປະຕິບັດຕາມເຕັກນິກກ່ຽວກັບການກວດກາອະນາໄມຜະລິດຕະພັນສັດ ທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງກຳນົດອອກຢ່າງເຂັ້ມງວດ.

## ມາດຕາ 25. ການພົບພະຍາດຈຳເປັນຕ້ອງແຈ້ງຫຼັງຂ້າ

ຫາກພົບເຫັນພະຍາດທີ່ຈຳເປັນຕ້ອງແຈ້ງໃນລະຫວ່າງການກວດກາຫຼັງຂ້າ, ພະນັກງານກວດກາອະນາໄມຜະລິດຕະພັນສັດຕ້ອງສັ່ງໃຫ້ຍົກເລີກການຂ້າສັດໂຕຕໍ່ໄປທັນທີ ແລະ ທຳການທຳລາຍຊາກສັດທີ່ພົບພະຍາດນັ້ນ ເພື່ອປ້ອງກັນການແຜ່ລາມຂອງເຊື້ອພະຍາດ, ພ້ອມນັ້ນຕ້ອງສັ່ງໃຫ້ເຈົ້າຂອງໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍອະນາໄມຂ້າເຊື້ອຕາມຫຼັກການດ້ານວິຊາການຢ່າງເຂັ້ມງວດ, ໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຕ້ອງຖືກປິດ ແລະ ສາມາດເປີດດຳເນີນການຂ້າສັດໄດ້ກໍຕໍ່ເມື່ອ ໄດ້ຮັບການຢັ້ງຢືນວ່າໂຮງຂ້າສັດໄດ້ອະນາໄມຂ້າເຊື້ອຕາມຫຼັກການດ້ານວິຊາການຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດກຳນົດອອກຢ່າງຄົບຖ້ວນສົມບູນແລ້ວເທົ່ານັ້ນ.

ໃນກໍລະນີດັ່ງກ່າວ ທັງເຈົ້າຂອງສັດ ແລະ ເຈົ້າຂອງໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍຈະບໍ່ໄດ້ຮັບການທົດແທນຄືນໃດໆ, ຫາກມີເຫດການພະຍາດລະບາດສັດຢ່າງຮ້າຍແຮງທີ່ມີລັກ

ສະນະກວມລວມທົ່ວຂົງເຂດ ແລະ ລັດຖະບານໄດ້ປະກາດເປັນເຂດພະຍາດລະບາດສັດທີ່ຈະຕ້ອງໄດ້ຂ້າສັດໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍເພື່ອຄວບຄຸມພະຍາດລະບາດບໍ່ໃຫ້ແຜ່ລາມເປັນວົງກວ້າງ ເຈົ້າຂອງສັດ ຫຼື ຜູ້ປະກອບການຂ້າສັດ ຈະໄດ້ຮັບນະໂຍບາຍຊ່ວຍເຫຼືອຈາກລັດຖະບານຕາມຄວາມເໝາະສົມ.

ໃນກໍລະນີເກີດພົບພະຍາດລະບາດທີ່ຈຳເປັນຕ້ອງແຈ້ງນັ້ນ, ພະນັກງານກວດກາອະນາໄມຜະລິດຕະພັນສັດ ຈະຕ້ອງໄດ້ລາຍງານເຫດການດັ່ງກ່າວໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແລະ ເຈົ້າໜ້າທີ່ສັດຕະວະແພດຕົ້ນທາງຮັບຊາບພາຍໃນ 24 ຊົ່ວໂມງ.

## ມາດຕາ 26. ການຢັ້ງຢືນຜົນການກວດກາອະນາໄມຜະລິດຕະພັນສັດ

ຊີ້ນ ຫຼື ຜະລິດຕະພັນຈາກສັດ ກ່ອນຈະນຳອອກຈາກໂຮງງານຂ້າສັດ, ບ່ອນຂ້າສັດຍ່ອຍ ຫຼື ອອກຈາກສະຖານທີ່ຂ້າສັດ ຈະຕ້ອງໄດ້ຮັບການຢັ້ງຢືນການກວດກາອະນາໄມເສຍກ່ອນ. ຢູ່ໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ພະນັກງານ ຫຼື ຜູ້ກວດກາອະນາໄມຜະລິດຕະພັນສັດຈະເປັນຜູ້ຕັດສິນໃຈໃນການຢັ້ງຢືນ ແລະ ຈ້ຳກາຈ້ຳຊີ້ນໃສ່ຊາກສັດ ແລະ ອະໄວຍະວະຕ່າງໆຂອງສັດທີ່ເຫັນວ່າປອດໄພ, ບໍ່ມີພະຍາດ ເໝາະສົມສຳລັບການຈຳໜ່າຍ ຫຼື ບໍລິໂພກ.

ຊາກສັດ ຫຼື ພາກສ່ວນໃດໜຶ່ງຂອງສັດທີ່ພິຈາລະນາແລ້ວ ເຫັນວ່າຕ້ອງໄດ້ນຳໄປຕົ້ມ ຫຼື ນຳໄປແຊ່ແຂງ ຫຼື ນຳໄປປຸງແຕ່ງໃຫ້ສຸກດີກ່ອນນຳໄປບໍລິໂພກນັ້ນ ຕ້ອງຈ້ຳກາສະເພາະພິເສດໃສ່ໂດຍໃຊ້ສີນ້ຳເມິກແຕກຕ່າງກັບສີນ້ຳເມິກທີ່ໃຊ້ຈ້ຳຊີ້ນທີ່ໄດ້ລະບຸໄວ້ໃນວັກທີ 1 ຂອງມາດຕານີ້.

ຊາກສັດ ຫຼື ພາກສ່ວນໃດໜຶ່ງຂອງສັດ ທີ່ບໍ່ອະນຸຍາດໃຫ້ນຳໄປບໍລິໂພກ ເຊິ່ງຕ້ອງຖືກທຳລາຍຖິ້ມ ກໍຕ້ອງຈ້ຳກາສະເພາະໃສ່ໃຫ້ຊັດເຈນ ໂດຍຕ້ອງແຍກເກັບໄວ້ໃນຫ້ອງທີ່ກຽມໄວ້ສະເພາະຕ່າງຫາກ ແລະ ຕ້ອງນຳໄປທຳລາຍທັນທີໃນບ່ອນທຳລາຍຊາກສັດສະເພາະ.

ກາຈ້ຳ ແລະ ນ້ຳເມິກ ຕ້ອງມີຮູບແບບ ແລະ ສ່ວນປະກອບເປັນມາດຖານດຽວເອກະພາບກັນຕາມທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດກຳນົດ ປະກາດໃຊ້ໃນຂອບເຂດທົ່ວປະເທດ.

## ມາດຕາ 27. ການທຳລາຍຊີ້ນ ແລະ ຜະລິດຕະພັນສັດທີ່ບໍ່ສາມາດບໍລິໂພກໄດ້

ຊີ້ນ, ຊີ້ນສ່ວນ ຫຼື ສິ່ງເສດເຫຼືອຕ່າງໆຂອງສັດທີ່ ພະນັກງານ ຫຼື ຜູ້ກວດກາອະນາໄມຜະລິດຕະພັນສັດໄດ້ຕັດສິນວ່າບໍ່ສາມາດນຳໄປບໍລິໂພກໄດ້ ຫຼື ບໍ່ສາມາດໃຊ້ປະໂຫຍດຢ່າງອື່ນໄດ້ນັ້ນຕ້ອງຖືກທຳລາຍ ຫຼື ກຳຈັດຕາມວິທີການທີ່ທາງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດກຳນົດ, ພ້ອມດຽວກັນນີ້ກໍຕ້ອງຢູ່ພາຍໃຕ້ການຄວບຄຸມຕິດຕາມ ຂອງພະນັກງານທີ່ຮັບຜິດຊອບຢ່າງເຄັ່ງຄັດ.

## ມາດຕາ 28. ການນຳໃຊ້ຜະລິດຕະພັນສັດທີ່ບໍ່ສາມາດບໍລິໂພກໄດ້

ໃນກໍລະນີຜະລິດຕະພັນສັດທີ່ບໍ່ສາມາດບໍລິໂພກໄດ້ ແຕ່ສາມາດນຳໄປໃຊ້ເຂົ້າໃນການປຸງແຕ່ງເປັນຜະລິດຕະພັນຢ່າງອື່ນໄດ້ນັ້ນ ກ່ອນນຳເອົາອອກຈາກໂຮງງານຂ້າສັດ ຫຼື ບ່ອນຂ້າສັດ

ຍ່ອຍຕ້ອງໄດ້ຮັບອະນຸຍາດ ຈາກພະນັກງານ ຫຼື ຜູ້ກວດກາອະນາໄມຜະລິດຕະພັນສັດ ແລະ ສັດຕະວະແພດເສຍກ່ອນ.

**ມາດຕາ 29. ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນສັດ**

ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນສັດ ຕ້ອງຮັບປະກັນດ້ານຫຼັກການສຸຂານາໄມ, ຄວາມປອດໄພຕໍ່ຜູ້ບໍລິໂພກ, ບໍ່ໃຫ້ມີຜົນກະທົບຕໍ່ສັງຄົມ ແລະ ສະພາບແວດລ້ອມ. ສະຖານທີ່ເກັບຮັກສາ ແລະ ປຸງແຕ່ງຕ້ອງປະຕິບັດຕາມມາດຖານເຕັກນິກທີ່ກໍານົດໄວ້ໃນກໍານົດໝາຍເຕັກນິກກ່ຽວກັບການຄຸ້ມຄອງສັດລ້ຽງ ແລະ ຜະລິດຕະພັນສັດໃນ ສປປ ລາວ ຢ່າງເຂັ້ມງວດ.

**ມາດຕາ 30. ການຈໍາໜ່າຍຊີ້ນ ຫຼື ຜະລິດຕະພັນສັດ**

ການຈໍາໜ່າຍຊີ້ນ ຫຼື ຜະລິດຕະພັນສັດ ຕ້ອງປະຕິບັດຕາມຫຼັກອະນາໄມສໍາລັບການວາງຂາຍດັ່ງນີ້:

1. **ການຈໍາໜ່າຍຊີ້ນ ແລະ ຜະລິດຕະພັນສັດຢູ່ໃນທ້ອງຕະຫຼາດ:**
   - ຊີ້ນ ຫຼື ຜະລິດຕະພັນສັດທີ່ວາງຂາຍຕ້ອງມີເອກະສານຢັ້ງຢືນທີ່ອອກໃຫ້ໂດຍໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ທີ່ໄດ້ຮັບການຢັ້ງຢືນມາດຖານເຕັກນິກຈາກກົມລ້ຽງສັດ ແລະ ການປະມົງ, ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ຫຼື ນະຄອນເທົ່ານັ້ນ;
   - ຊີ້ນ ແລະ ເຄື່ອງໃນ ທີ່ວາງຂາຍຢູ່ຕະຫຼາດ ຄວນຫ້ອຍໄວ້ ໂດຍໃຊ້ຂໍເກາະທີ່ເຮັດດ້ວຍວັດຖຸທີ່ບໍ່ເຂົ້າໝ້ຽງ ແລະ ທໍາຄວາມສະອາດໄດ້ງ່າຍ;
   - ໃນກໍລະນີວາງຂາຍຢູ່ເທິງໂຕະ, ຫ້າມວາງຊີ້ນ ແລະ ເຄື່ອງໃນປົນກັນ, ເລືອດທີ່ວາງຂາຍຕ້ອງແບ່ງໄວ້ໃນຖັງຕ່າງຫາກ. ໜ້າໂຕະວາງຂາຍຊີ້ນຕ້ອງເຮັດດ້ວຍວັດຖຸທີ່ບໍ່ເຂົ້າໝ້ຽງ, ທໍາຄວາມສະອາດງ່າຍ, ຄວາມສູງຂອງໂຕະຈາກໜ້າດິນຢ່າງໜ້ອຍໃຫ້ໄດ້ 80 ຊັງຕີແມັດ ແລະ ໜ້າກ້ວາງບໍ່ໃຫ້ເກີນ 80 ຊັງຕີແມັດ ແລະ ໂຕະຕ້ອງໄດ້ທໍາຄວາມສະອາດທຸກໆຄັ້ງທັງກ່ອນ ແລະ ພາຍຫຼັງສໍາເລັດການວາງຂາຍແລ້ວ;
   - ຜູ້ຂາຍຊີ້ນກໍຕ້ອງຮັກສາຄວາມສະອາດໃນລະດັບສູງ, ຕ້ອງຕັດເລັບມືໃຫ້ສັ້ນ ແລະ ລ້າງມືຫຼາຍຄັ້ງເທົ່າທີ່ຈະເປັນໄປໄດ້ ໂດຍສະເພາະພາຍຫຼັງທີ່ໃຊ້ຫ້ອງນໍ້າທຸກຄັ້ງ.
2. **ການຈໍາໜ່າຍຊີ້ນ ແລະ ຜະລິດຕະພັນສັດຢູ່ຮ້ານສັບພະສິນຄ້າ:**
   - ຊີ້ນ ຫຼື ຜະລິດຕະພັນສັດທີ່ວາງຂາຍ ຕ້ອງມີເອກະສານຢັ້ງຢືນຈາກໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍທີ່ໄດ້ຢັ້ງຢືນມາດຖານເຕັກນິກຈາກກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ຫຼື ນະຄອນ;
   - ຊີ້ນ ຫຼື ຜະລິດຕະພັນສັດ ທີ່ວາງຂາຍນັ້ນ ຕ້ອງມີການຫຸ້ມຫໍ່ຖືກຕາມຫຼັກອະນາໄມ ແລະ ຕ້ອງຕິດໃບແນະນໍາທີ່ບົ່ງບອກເຖິງນໍ້າໜັກ, ລາຄາ, ວັນທີຫຸ້ມຫໍ່, ຊະນິດ, ປະເພດ ແລະ ແຫຼ່ງທີ່ມາຂອງຊີ້ນ ຫຼື ຜະລິດຕະພັນສັດ;
   - ບ່ອນວາງຂາຍ ຕ້ອງຈັດວາງຢູ່ໃນຕູ້ແຊ່ແຂງ ຫຼື ຕູ້ແກ້ວ ທີ່ມີລະບົບຄວາມເຢັນຢູ່ລະຫວ່າງ 0 ຫາ 4 ອົງສາເຊ.

ມາດຕາ 31. ການຂົນສົ່ງຊີ້ນ ຫຼື ຜະລິດຕະພັນສັດ

ການຂົນສົ່ງຊີ້ນ ຫຼື ຜະລິດຕະພັນສັດເພື່ອຈຳໜ່າຍ ຕ້ອງຂົນສົ່ງດ້ວຍພາຫະນະທີ່ຮັບປະກັນ, ຕ້ອງມີສິ່ງປົກປິດ ຫຼື ຫຸ້ມຫໍ່ເປັນຢ່າງດີ ເພື່ອປ້ອງກັນຂີ້ຝຸ່ນ, ແມງວັນ ແລະສິ່ງອື່ນໆ ທີ່ຈະເຮັດໃຫ້ມີການປົນເປື້ອນໃສ່ຊີ້ນ ແລະ ຕ້ອງປະຕິບັດຫຼັກອະນາໄມດັ່ງລຸ່ມນີ້:

1. ພາຫະນະທີ່ໃຊ້ຂົນສົ່ງຊີ້ນ ແລະ ຜະລິດຕະພັນສັດ ຕ້ອງສະອາດ, ບໍ່ເຂົ້າໜຽງ, ມີລະບົບຄວາມເຢັນ;
2. ການຂົນສົ່ງຊີ້ນ ແລະ ຜະລິດຕະພັນສັດ ຕ້ອງແຍກແຕ່ລະພາກສ່ວນບໍ່ໃຫ້ປົນເປກັນ;
3. ຕ້ອງທຳຄວາມສະອາດຂ້າເຊື້ອພາຫະນະຂົນສົ່ງທັງກ່ອນ ແລະ ຫຼັງການນຳໃຊ້ທຸກຄັ້ງ.

## ໝວດທີ 5

## ການຄຸ້ມຄອງ ແລະ ກວດກາວຽກງານການກວດກາອະນາໄມຜະລິດຕະພັນສັດ

ມາດຕາ 32. ອົງການຄຸ້ມຄອງວຽກງານການກວດກາອະນາໄມຜະລິດຕະພັນສັດ

ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ກ່ຽວກັບວຽກງານການຂ້າສັດ ແລະ ການກວດກາອະນາໄມຜະລິດຕະພັນສັດໂດຍມອບໃຫ້ກົມລ້ຽງສັດ ແລະ ການປະມົງເປັນເຈົ້າການປະສານສົມທົບກັບຂະແໜງການອື່ນເຊັ່ນ: ຂະແໜງອຸດສາຫະກຳ ແລະ ການຄ້າ, ສາທາລະນະສຸກ, ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ສະມາຄົມລ້ຽງສັດ, ສະມາຄົມສັດຕະວະແພດ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານການກວດກາອະນາໄມຜະລິດຕະພັນສັດ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ແລະ ກວດກາການລ້ຽງສັດ ແລະ ການສັດຕະວະແພດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 77 ແລະ ມາດຕາ 85 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ຊຶ່ງປະກອບດ້ວຍ:

1. ກົມລ້ຽງສັດ ແລະ ການປະມົງ ເປັນອົງການຄຸ້ມຄອງຂັ້ນສູນກາງ;
2. ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນ;
3. ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ເທດສະບານ;
4. ໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ.

ອົງການຄຸ້ມຄອງວຽກງານການກວດກາອະນາໄມຜະລິດຕະພັນສັດ ຍັງມີພະນັກງານ, ຜູ້ກວດກາອະນາໄມຜະລິດຕະພັນສັດ ແລະ ສັດຕະວະແພດບ້ານ ເປັນຜູ້ປະຕິບັດໜ້າທີ່ໃຫ້ແກ່ອົງການຕາມຂັ້ນຄຸ້ມຄອງຂອງຕົນ.

ມາດຕາ 33. ສິດ ແລະ ໜ້າທີ່ ຂອງກົມລ້ຽງສັດ ແລະ ການປະມົງ

ໃນການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດ, ກົມລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເປັນເສນາທິການໃຫ້ກະຊວງກະສິກຳ ແລະ ປ່າໄມ້ ໃນການຜັນຂະຫຍາຍແນວທາງຍຸດທະສາດ, ນະໂຍບາຍຕ່າງໆ ໃຫ້ກາຍເປັນແຜນງານ, ໂຄງການລະອຽດ, ເປັນລະບຽບການ ແລະ ມາດຖານເຕັກນິກ ເພື່ອຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດໃນຂອບເຂດທົ່ວປະເທດ;
2. ໂຄສະນາເຜີຍແຜ່ນະໂຍບາຍ ແລະ ລະບຽບການກ່ຽວກັບວຽກງານກວດກາອະນາໄມຜະລິດຕະພັນສັດຢ່າງກວ້າງຂວາງ ເພື່ອໃຫ້ສາທາລະນະຊົນ ແລະ ຜູ້ປະກອບການຮັບຊາບຢ່າງທົ່ວເຖິງ;
3. ຊີ້ນຳ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານການກວດການອະນາໄມຜະລິດຕະພັນສັດຂອງຂະແໜງສາຍຕັ້ງໃນຂອບເຂດທົ່ວປະເທດ;
4. ສ້າງ, ບຳລຸງຍົກລະດັບ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງພະນັກງານຄຸ້ມຄອງ ແລະ ກວດກາອະນາໄມຊີ້ນ ໂດຍມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ;
5. ຢັ້ງຢືນມາດຖານເຕັກນິກ ແລະ ສະເໜີປະກອບຄຳເຫັນຕໍ່ການຂໍສ້າງຕັ້ງ ຫຼື ດຳເນີນງານຂອງໂຮງງານຂ້າສັດຂະໜາດກາງ ແລະ ຂະໜາດໃຫຍ່ ໂດຍມີການສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ;
6. ສະເໜີໃຫ້ກະຊວງຖອນໃບຢັ້ງຢືນມາດຖານເຕັກນິກ ຫຼື ສະເໜີຕໍ່ອົງການຄຸ້ມຄອງຂອງຂະແໜງການອື່ນທີ່ກ່ຽວຂ້ອງ ຍົກເລີກການອະນຸຍາດໃນການດຳເນີນທຸລະກິດກ່ຽວກັບໂຮງງານຂ້າສັດ;
7. ແກ້ໄຂຂໍ້ສະເໜີ, ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳໃຫ້ພະນັກງານ ແລະ ຜູ້ປະກອບການໃນການຈັດຕັ້ງປະຕິບັດລະບຽບກ່ຽວກັບການກວດກາອະນາໄມຜະລິດຕະພັນສັດ;
8. ປຸກລະດົມຂົນຂວາຍ, ຍາດແຍ່ງ ແລະ ຄຸ້ມຄອງນຳໃຊ້ທຶນຮອນທັງພາຍໃນ ແລະ ຕ່າງປະເທດເພື່ອພັດທະນາວຽກງານກວດກາອະນາໄມຜະລິດຕະພັນສັດ;
9. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບການພັດທະນາ, ປັບປຸງຍົກລະດັບມາດຖານໂຮງງານຂ້າສັດ, ບ່ອນຂ້າສັດຍ່ອຍ ແລະ ເພີ່ມຄວາມອາດສາມາດດ້ານເຕັກນິກໃນການກວດກາອະນາໄມຜະລິດຕະພັນສັດ;
10. ສະຫຼຸບ, ລາຍງານຜົນ ການຈັດຕັ້ງປະຕິບັດວຽກງານກວດກາອະນາໄມ ຜະລິດຕະພັນສັດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ.

**ມາດຕາ 34. ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນ**

ໃນການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດ, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງ ແລະ ລະບຽບການໃຫ້ເປັນແຜນການງານເພື່ອຈັດຕັ້ງປະຕິບັດ, ຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນ

ສັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ແນະນຳໂຄສະນາເຜີຍແຜ່ລະບຽບການ ກ່ຽວກັບວຽກງານກວດກາອະນາໄມຜະລິດຕະພັນສັດຢ່າງກ້ວາງຂວາງ ເພື່ອໃຫ້ສາທາລະນະຊົນ, ຜູ້ປະກອບການເຊື່ອມຊຶມເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງທົ່ວເຖິງ;
3. ຊີ້ນຳ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານການກວດກາອະນາໄມຜະລິດຕະພັນສັດຂອງຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ເທດສະບານ;
4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງພະນັກງານຄຸ້ມຄອງ ແລະ ກວດກາວຽກງານກວດກາອະນາໄມຜະລິດຕະພັນສັດ ແລະ ພະນັກງານກວດກາອະນາໄມຜະລິດຕະພັນສັດທີ່ຢູ່ໃນການຄຸ້ມຄອງຂອງຕົນ, ພ້ອມທັງສົ່ງເສີມບຳລຸງຍົກລະດັບ, ຊັບຊ້ອນຮັບໜ້າທີ່ຕຳແໜ່ງ, ປະຕິບັດນະໂຍບາຍຢ່າງເໝາະສົມ ນັບທັງການປະຕິບັດວິໄນ, ສຶກສາອົບຮົມໃນກໍລະນີທີ່ກະທຳຜິດຕໍ່ລະບຽບກົດໝາຍ;
5. ຢັ້ງຢືນມາດຖານເຕັກນິກ ແລະ ປະກອບຄຳເຫັນຕໍ່ການຂໍສ້າງຕັ້ງ ຫຼື ດຳເນີນງານຂອງໂຮງງານຂ້າສັດຂະໜາດນ້ອຍ ແລະ ບ່ອນຂ້າສັດຍ່ອຍ ໂດຍມີການສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ;
6. ຖອນໃບຢັ້ງຢືນມາດຖານເຕັກນິກ ຫຼື ນຳສະເໜີ ຕໍ່ອົງການຄຸ້ມຄອງຂອງຂະແໜງການຕົນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຍົກເລີກການອະນຸຍາດໃນການດຳເນີນທຸລະກິດກ່ຽວກັບໂຮງງານຂ້າສັດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ແກ້ໄຂຂໍ້ສະເໜີ, ຂອກຄຳແນະນຳໃຫ້ພະນັກງານ ແລະ ຜູ້ປະກອບການໃນການຈັດຕັ້ງປະຕິບັດລະບຽບກ່ຽວກັບການກວດກາອະນາໄມຜະລິດຕະພັນສັດ;
8. ປຸກລະດົມຂົນຂວາຍ, ຍາດແຍ່ງ ແລະ ຄຸ້ມຄອງນຳໃຊ້ທຶນຮອນທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານກວດກາອະນາໄມຜະລິດຕະພັນສັດຢູ່ໃນຂອບເຂດແຂວງ, ນະຄອນຂອງຕົນ;
9. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານກວດກາອະນາໄມຜະລິດຕະພັນສັດຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານກວດກາອະນາໄມຜະລິດຕະພັນສັດ ໃຫ້ກົມລ້ຽງສັດ ແລະ ການປະມົງກະຊວງກະສິກຳ ແລະ ປ່າໄມ້ຢ່າງເປັນປົກກະຕິ.

**ມາດຕາ 35. ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ເທດສະບານ**

ໃນການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ເທດສະບານມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນງານ, ໂຄງການ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳຂອງຂັ້ນເທິງ ກ່ຽວກັບການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ເຜີຍແຜ່ລະບຽບການກ່ຽວກັບວຽກງານ ກວດກາອະນາໄມຜະລິດຕະພັນສັດອອກຢ່າງກວ້າງຂວາງ ເພື່ອໃຫ້ສາທາລະນະຊົນ, ຜູ້ປະກອບການເຊື່ອມຊຶມເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
3. ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານກວດກາອະນາໄມຜະລິດຕະພັນສັດຢູ່ພາຍໃນເມືອງ ຫຼື ເທດສະບານຂອງຕົນ;
4. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງພະນັກງານຄຸ້ມຄອງ ແລະ ກວດກາວຽກງານກວດກາອະນາໄມຜະລິດຕະພັນສັດ ແລະ ນັກວິຊາການກວດກາອະນາໄມຜະລິດຕະພັນສັດທີ່ຢູ່ໃນການຄຸ້ມຄອງຂອງຕົນ, ພ້ອມທັງປະເມີນຜົນການປະຕິບັດໜ້າທີ່ ແລະ ນຳສະເໜີຂັ້ນເທິງຖັດຕົນ, ສົ່ງເສີມບຳລຸງຍົກລະດັບ, ຊັບຊ້ອນຮັບໜ້າທີ່ຕຳແໜ່ງ, ປະຕິບັດນະໂຍບາຍຢ່າງເໝາະສົມ ນັບທັງການປະຕິບັດວິໄນ, ສຶກສາອົບຮົມ, ໃນກໍລະນີທີ່ກະທຳຜິດຕໍ່ລະບຽບກົດໝາຍ;
5. ກວດກາ, ນຳສະເໜີພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນ ອອກໃບຢັ້ງຢືນມາດຖານເຕັກນິກ ແລະ ປະກອບຄຳເຫັນຕໍ່ການຂໍສ້າງຕັ້ງ ຫຼື ດຳເນີນງານຂອງໂຮງງານຂ້າສັດຂະໜາດນ້ອຍ, ບ່ອນຂ້າສັດຍ່ອຍ ຫຼື ຮ້ານບໍລິການຕ່າງໆ ໂດຍມີການສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ;
6. ກວດກາຕິດຕາມ, ນຳສະເໜີພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຖອນໃບຢັ້ງຢືນມາດຖານເຕັກນິກ ຫຼື ນຳສະເໜີຕໍ່ອົງການຄຸ້ມຄອງຂອງຂະແໜງການຕົນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຍົກເລີກການອະນຸຍາດໃນການດຳເນີນທຸລະກິດກ່ຽວກັບໂຮງງານຂ້າສັດທີ່ຢູ່ໃນຂົງເຂດເມືອງຂອງຕົນ;
7. ແກ້ໄຂຂໍ້ສະເໜີ, ອອກຄຳແນະນຳໃຫ້ພະນັກງານ ແລະ ຜູ້ປະກອບການໃນການຈັດຕັ້ງປະຕິບັດລະບຽບກ່ຽວກັບການກວດກາອະນາໄມຜະລິດຕະພັນສັດ;
8. ປຸກລະດົມຂົນຂວາຍ, ຍາດແຍ່ງ ແລະ ຄຸ້ມຄອງນຳໃຊ້ທຶນຮອນທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານກວດກາອະນາໄມຜະລິດຕະພັນສັດຢູ່ໃນຂອບເຂດເມືອງ, ເທດສະບານ ຂອງຕົນ;
9. ປະສານທົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານກວດກາອະນາໄມຜະລິດຕະພັນສັດ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານກວດກາອະນາໄມຜະລິດຕະພັນສັດໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນ ຊາບຢ່າງເປັນປົກກະຕິ.

**ມາດຕາ 36. ສິດ ແລະ ໜ້າທີ່ຂອງໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ**

ໃນການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດຢູ່ໃນລະດັບບ້ານ, ໜ່ວຍລ້ຽງສັດ ແລະ ສັດຕະວະແພດ ບ້ານມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຮັບຄຳສັ່ງ, ຄຳແນະນຳ ຂອງອົງການປົກຄອງບ້ານ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້

ປະຈຳເມືອງ, ເທດສະບານ ກ່ຽວກັບການກວດກາອະນາໄມຜະລິດຕະພັນສັດ ເພື່ອຈັດຕັ້ງປະຕິບັດໃນຂອບເຂດບ້ານຂອງຕົນ;

2. ເຜີຍແຜ່ລະບຽບການກ່ຽວກັບການປ້ອງກັນ ແລະ ຄວບຄຸມພະຍາດລະບາດສັດ ນັບທັງລະບຽບການກວດກາອະນາໄມຜະລິດຕະພັນສັດໃຫ້ຊາວບ້ານເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
3. ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດວຽກງານຂອງສັດຕະວະແພດບ້ານ ໃນການກວດກາອະນາໄມຜະລິດຕະພັນສັດຢູ່ພາຍໃນຂອບເຂດບ້ານຂອງຕົນ;
4. ສະເໜີນາຍບ້ານແຕ່ງຕັ້ງ ຫຼື ໃຫ້ຢຸດການປະຕິບັດໜ້າທີ່ຂອງສັດຕະວະແພດບ້ານ ຫຼື ນຳສະເໜີຂັ້ນເທິງຂັ້ນຕົນ ເພື່ອສົ່ງເສີມສັດຕະວະແພດບ້ານໄປບຳລຸງຍົກລະດັບຄວາມຮູ້ ແລະ ປະຕິບັດນະໂຍບາຍຢ່າງເໝາະສົມ. ພ້ອມທັງເປັນເຈົ້າການສະເໜີອົງການປົກຄອງບ້ານປະຕິບັດວິໄນ, ສຶກສາອົບຮົມສັດຕະວະແພດບ້ານ ໃນກໍລະນີທີ່ກະທຳຜິດຕໍ່ລະບຽບກົດໝາຍ;
5. ເປັນເຈົ້າການລາຍງານບັນຫາທີ່ພົບພໍ້ໃນການປະຕິບັດວຽກງານຂອງຕົນ ໃຫ້ພະນັກງານທີ່ກ່ຽວຂ້ອງ ຫຼື ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ເທດສະບານ ຮັບຊາບເພື່ອວາງມາດຕະການແກ້ໄຂ.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງພະນັກງານກວດກາອະນາໄມຜະລິດຕະພັນສັດ**

ພະນັກງານກວດກາອະນາໄມຜະລິດຕະພັນສັດ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ປະຕິບັດວຽກງານການກວດກາອະນາໄມຜະລິດຕະພັນສັດ ຕາມແຜນວຽກປະຈຳເດືອນ, ປະຈຳອາທິດ ແລະ ປະຈຳວັນຂອງຕົນ ພ້ອມທັງປະຕິບັດຄຳສັ່ງ, ແຈ້ງການ ແລະ ຄຳແນະນຳຂອງຂັ້ນເທິງ ກ່ຽວກັບການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນ ສັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຈັດຕັ້ງການຝຶກອົບຮົມອະທິບາຍກ່ຽວກັບຫຼັກການສຸຂານາໄມໃນໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ໃຫ້ແກ່ຜູ້ກວດກາອະນາໄມຜະລິດຕະພັນສັດ, ພະນັກງານ ແລະ ກຳມະກອນທີ່ເຮັດວຽກຢູ່ໂຮງງານຂ້າສັດ ໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດ;
3. ກວດກາຄວາມຖືກຕ້ອງດ້ານເອກະສານຂອງສັດທີ່ຈະນຳເຂົ້າມາຂ້າ ເຊັ່ນ: ໃບອະນຸຍາດເຄື່ອນຍ້າຍສັດ, ໃບຢັ້ງຢືນສຸຂະພາບສັດ, ໃບທະບຽນພິມສັດ ແລະ ໜັງສືຊື້ຂາຍສັດ;
4. ຕິດຕາມກວດກາສະຖານທີ່ກັກຂັງສັດ ແລະ ການກວດກາສຸຂະພາບສັດກ່ອນຂ້າ;
5. ຕິດຕາມກວດກາການຂ້າສັດ, ການກວດກາຫຼັງຂ້າ ແລະ ການຢັ້ງຢືນຜະລິດຕະພັນສັດຫຼັງຂ້າ, ການເກັບຮັກສາ, ການອະນຸຍາດຂົນສົ່ງຜະລິດຕະພັນສັດເພື່ອນຳໄປຈຳໜ່າຍ;
6. ເກັບຕົວຢ່າງສົ່ງກວດເປັນປົກກະຕິ ຫຼື ໃນກໍລະນີສົງໄສຕິດເຊື້ອພະຍາດ;
7. ຕິດຕາມກວດກາການຈຳໜ່າຍຜະລິດຕະພັນສັດຢູ່ຕາມທ້ອງຕະຫຼາດ ແລະ ຮ້ານສັບ

ພະສິນຄ້າຕ່າງໆ;

8. ກັກ ຫຼື ຢຶດຊີ້ນ ແລະ ຜະລິດຕະພັນສັດ ທີ່ສົງໄສວ່າຕິດເຊື້ອພະຍາດລະບາດສັດ ຫຼື ບໍ່ໄດ້ຜ່ານການຢັ້ງຢືນຢ່າງຖືກຕ້ອງ ໃນນີ້ລວມທັງຊີ້ນ ຫຼື ຜະລິດຕະພັນສັດທີ່ມີການລັກລອບເຄື່ອນຍ້າຍເພື່ອຈຳໜ່າຍ;
9. ຕິດຕາມຄວບຄຸມການເຮັດອະນາໄມ ແລະ ຂ້າເຊື້ອໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;
10. ສັ່ງໂຈະການຂ້າສັດໃນກໍລະນີກວດພົບເຊື້ອພະຍາດລະບາດສັດ;
11. ຕິດຕາມ, ກວດກາການທຳລາຍສັດ ຫຼື ຊາກສັດໃນກໍລະນີພົບເຊື້ອພະຍາດລະບາດສັດ;
12. ສະເໜີຕໍ່ອົງການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດ ຂັ້ນເທິງຂອງຕົນສັ່ງປິດໂຮງງານຂ້າສັດໃນກໍລະນີກວດພົບເຊື້ອພະຍາດລະບາດສັດ ຕາມລະບຽບການ;
13. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານກວດກາອະນາໄມຜະລິດຕະພັນສັດ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງຢ່າງເປັນປົກກະຕິ ແລະ ລາຍງານສຸກເສີນໃນກໍລະນີພົບພະຍາດລະບາດຢູ່ໃນໂຮງງານຂ້າສັດ;
14. ໃນກໍລະນີພະນັກງານກວດກາອະນາໄມຜະລິດຕະພັນສັດ ເປັນຜູ້ກວດກາອະນາໄມໃຫ້ໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍເອງ, ຕ້ອງປະຕິບັດພັນທະ ແລະ ໜ້າທີ່ຂອງຕົນຕາມມາດຕະຖານເຕັກນິກກ່ຽວກັບການດຳເນີນງານຂອງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດອອກຢ່າງເຂັ້ມງວດ.

**ມາດຕາ 38. ສິດ ແລະ ໜ້າທີ່ຂອງຜູ້ກວດກາອະນາໄມຜະລິດຕະພັນສັດ**

ໃນການກວດກາອະນາໄມຜະລິດຕະພັນສັດຢູ່ໃນໂຮງງານຂ້າສັດທີ່ມີ ເງື່ອນໄຂຄົບຖ້ວນສາມາດແຕ່ງຕັ້ງຜູ້ກວດກາອະນາໄມຜະລິດຕະພັນສັດຂອງຕົນເອງຂຶ້ນ ແຕ່ຕ້ອງໄດ້ຮັບການເຫັນດີຈາກອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ການສັດຕະວະແພດເສຍກ່ອນ, ສິດ ແລະ ໜ້າທີ່ຂອງຜູ້ກວດກາອະນາໄມຜະລິດຕະພັນສັດນັ້ນ ໃຫ້ປະຕິບັດຕາມມາດຕະຖານເຕັກນິກກ່ຽວກັບການດຳເນີນງານຂອງໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ທີ່ກົມລ້ຽງສັດ ແລະ ການປະມົງກຳນົດອອກ.

**ມາດຕາ 39. ສິດ ແລະ ໜ້າທີ່ຂອງສັດຕະວະແພດບ້ານ**

1. ປະສານກັບອົງການປົກຄອງບ້ານ ແລະ ພະນັກງານລ້ຽງສັດ ຫຼື ສັດຕະວະແພດເມືອງ ເພື່ອເຜີຍແຜ່ລະບຽບການກ່ຽວກັບວຽກງານກວດກາອະນາໄມຜະລິດຕະພັນສັດ ຫລື ລະບຽບການກ່ຽວຂ້ອງກັບວຽກງານລ້ຽງສັດ ແລະ ສັດຕະວະແພດໃຫ້ຊາວບ້ານເຂົ້າໃຈ ແລະ ຈັດຕັ້ງປະຕິບັດ;
2. ກວດກາອະນາໄມຜະລິດຕະພັນສັດ ໃຫ້ແກ່ຊາວບ້ານຢູ່ພາຍໃນບ້ານຂອງຕົນ ໃນກໍລະນີທີ່ມີການຂ້າສັດ ເພື່ອບໍລິໂພກພາຍໃນຄອບຄົວ ຫຼື ບຸນປະເພນີ ເຊັ່ນ: ກິນລ້ຽງ,

ກິນດອງ, ກິນຮີດ ແລະ ອື່ນໆ;

3. ເປັນເຈົ້າການລາຍງານຜົນ ການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ແກ່ໜ່ວຍລ້ຽງສັດ ແລະ ສັດຕະວະແພດປະຈໍາບ້ານ, ນາຍບ້ານ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ປະຈໍາເມືອງ, ເທດສະບານ.

**ມາດຕາ 40. ອົງການກວດກາວຽກງານການກວດກາອະນາໄມຜະລິດຕະພັນສັດ**

ອົງການກວດກາວຽກງານກວດກາອະນາໄມຜະລິດຕະພັນສັດປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດ ຕາມທີ່ກໍານົດໄວ້ໃນ ມາດຕາ 32 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກປະກອບດ້ວຍ: ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ການຈັດຕັ້ງ ແລະ ພົນລະເມືອງລາວ.

**ມາດຕາ 41. ສິດ ແລະ ໜ້າທີ່ຂອງອົງການກວດກາວຽກງານການກວດກາອະນາໄມຜະລິດຕະພັນສັດ**

ອົງການກວດກາວຽກງານກວດກາອະນາໄມຜະລິດຕະພັນສັດ ມີສິດ ແລະ ໜ້າທີ່ ຕົ້ນຕໍດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບວຽກງານກວດກາອະນາໄມຜະລິດຕະພັນສັດ;
2. ກວດກາການປະຕິບັດສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານກວດກາອະນາໄມຜະລິດຕະພັນສັດ;
3. ກວດກາກິດຈະການ ລວມທັງການດໍາເນີນທຸລະກິດຂອງຜູ້ປະກອບການໂຮງງານຂ້າສັດບ່ອນຂ້າສັດຍ່ອຍ ລວມທັງບ່ອນບໍລິການປີ້ງ ແລະ ປີ່ນສັດຕ່າງໆ;
4. ກວດກາເອກະສານການຢັ້ງຢືນດ້ານການກວດກາອະນາໄມຜະລິດຕະພັນສັດ ລວມທັງເກັບຕົວຢ່າງເພື່ອກວດສອບຢັ້ງຢືນຄືນຕາມລະບຽບການ;
5. ຮຽກຮ້ອງຂໍຄວາມຮ່ວມມືຈາກພາກສ່ວນກ່ຽວຂ້ອງໃນການສະໜອງຂໍ້ມູນ ເພື່ອດໍາເນີນການສືບສວນ-ສອບສວນຄະດີກ່ຽວກັບການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ;
6. ແຕ່ງຕັ້ງພະນັກງານຂອງຕົນເພື່ອຕິດຕາມ, ກວດກາ, ເກັບກໍາຂໍ້ມູນ ລວມທັງນໍາພາໃນການສະກັດກັ້ນການຂ້າ ແລະ ຈໍາໜ່າຍຜະລິດຕະພັນສັດໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;
7. ນໍາໃຊ້ມາດຕະການທີ່ຈໍາເປັນ ຕໍ່ການລະເມີດລະບຽບກົດໝາຍກ່ຽວກັບການລ້ຽງສັດ ແລະ ການສັດຕະວະແພດ ໂດຍສະເພາະແມ່ນການລະເມີດບັນດາຂໍ້ຫ້າມທີ່ກໍານົດຢູ່ໃນຂໍ້ຕົກລົງສະບັບນີ້;
8. ພົວພັນ, ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນເພື່ອຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;

9. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານກວດກາແຕ່ລະໄລຍະໃຫ້ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ.

## ມາດຕາ 42. ຮູບການກວດກາ

ຮູບການກວດກາວຽກງານກວດກາຜະລິດຕະພັນສັດ ໃຫ້ປະຕິບັດຕາມສາມຮູບການ ຄື: ການກວດກາຕາມລະບົບປົກກະຕິ, ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ການກວດກາແບບສຸກເສີນ.

**ການກວດກາຕາມລະບົບປົກກະຕິ** ແມ່ນການກວດກາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະນັກງານກວດກາອະນາໄມຜະລິດຕະພັນສັດປະຈໍາຢູ່ໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ, ການປະຕິບັດງານຂອງພະນັກງານສັດຕະວະແພດທີ່ໄດ້ຮັບມອບໝາຍ ນັບທັງອົງການຈັດຕັ້ງຕ່າງໆທີ່ເຮັດໜ້າທີ່ຄຸ້ມຄອງວຽກງານການກວດກາອະນາໄມຜະລິດຕະພັນສັດ ຢູ່ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ຊຶ່ງຕ້ອງດໍາເນີນເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ.

**ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ** ແມ່ນການກວດກາຕາມແຜນການທີ່ໄດ້ກໍານົດໄວ້ແຕ່ລະໄລຍະ.

**ການກວດກາແບບສຸກເສີນ** ແມ່ນການກວດກາສະເພາະກິດກ່ຽວກັບບັນຫາໃດໜຶ່ງຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາຮູ້ລ່ວງໜ້າ.

## ມາດຕາ 43. ຂໍ້ຫ້າມ

ຫ້າມບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ມີການກະທໍາ ດັ່ງນີ້:

1. ຂ້າ, ຄົວ ແລະ ບໍລິໂພກສັດເທິງາ, ເຈັບ ຫຼື ຕາຍໂດຍບໍ່ຮູ້ສາເຫດ;
2. ຂ້າ, ຄົວ ແລະ ບໍລິໂພກສັດທີ່ເປັນພະຍາດລະບາດ ຫຼື ບໍ່ທັນໝົດໄລຍະຂອງສານຕົກຄ້າງ;
3. ຂ້າສັດຖືພາມານ ເປັນຕົ້ນສັດລາກແກ່ ຫຼື ສັດຢູ່ໃນໄລຍະທີ່ນໍາໃຊ້ເປັນແນວພັນ;
4. ຈໍາໜ່າຍ ຫຼື ຊຸກເຊື່ອງສັດ ແລະ ຜະລິດຕະພັນສັດ ທີ່ເປັນພະຍາດ ຫຼື ຈະເປັນພະຍາດ;
5. ນໍາໃຊ້ພາຫະນະຂົນສົ່ງ ຜະລິດຕະພັນສັດຮ່ວມກັບວັດຖຸສິ່ງຂອງຊະນິດທີ່ພາໃຫ້ມີຜົນສະທ້ອນ ຕໍ່ຄຸນນະພາບຂອງຜະລິດຕະພັນສັດ ແລະ ເປັນອັນຕະລາຍຕໍ່ຜູ້ບໍລິໂພກ;
6. ນໍາເອົາສັດອອກຈາກໂຮງພັກສັດ ຫຼືໂຮງງານຂ້າສັດ ເວັ້ນແຕ່ຈະໄດ້ຮັບອະນຸຍາດຈາກພະນັກງານຂ້າສັດ;
7. ນໍາຜະລິດຕະພັນສັດອອກຈາກໂຮງຂ້າສັດກ່ອນການກວດກາ ແລະ ຈໍ້າກາຢັ້ງຢືນຈາກພະນັກງານ ຫລື ຜູ້ກວດກາອະນາໄມຜະລິດຕະພັນສັດ;
8. ຮັບເອົາຜູ້ທີ່ມີອາການເຈັບປ່ວຍ ຫຼື ມີປະຫວັດເປັນພະຍາດຕິດຕໍ່ຮ້າຍແຮງເຂົ້າເຮັດວຽກໃນໂຮງງານຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ເຊັ່ນ: ເປັນພະຍາດລໍາໄສ້ຊໍາເຮື້ອ, ພະຍາດຕັບອັກເສບ, ພະຍາດວັນນະໂລກ, ພະຍາດຜິວໜັງ: ຂີ້ເຮື້ອນ, ຂີ້ກາກ, ຂີ້ທິດ ຫຼື

ພະຍາດຂີ້ທູດ;

9. ສວຍໃຊ້ສິດ ແລະ ໜ້າທີ່ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ ຫຼື ນາບຂູ່, ຮັບສິນບົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ ເນື່ອງມາຈາກວຽກງານການຂ້າສັດ ແລະ ການກວດກາອະນາໄມຜະລິດຕະພັນສັດ;
10. ກົດໜ່ວງຖ່ວງດຶງ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດທີ່ໄດ້ຮັບມອບໝາຍ;
11. ຂຶ້ນນັ່ງເທິງໂຕະທີ່ວາງຂາຍຊີ້ນ ຫຼື ຜະລິດຕະພັນສັດ;
12. ສູບຢາ, ກິນອາຫານ ຄ້ຽວໝາກ ແລະ ຖົ່ມນໍ້າລາຍ ຢູ່ໃນສະຖານທີ່ຂ້າສັດເດັດຂາດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 44. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມຄວາມເໝາະສົມຈາກລັດຖະບານ.

### ມາດຕາ 45. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ຕ້ອງຖືກຕັກເຕືອນ, ສຶກສາອົບຮົມ, ປັບໃໝ, ດໍາເນີນຄະດີອາຍາ ຫຼື ປະຕິບັດໂທດເພີ່ມຕາມທີ່ກໍານົດໄວ້ໃນກົດໝາຍ.

ພະນັກງານ ຫຼື ອົງການຈັດຕັ້ງໃດໜຶ່ງ ໄດ້ກະທໍາຜິດໃນການປະຕິບັດໜ້າທີ່ວຽກງານຂອງຕົນຕ້ອງຖືກປະຕິບັດວິໄນດ້ວຍຮູບການຕັກເຕືອນ, ສຶກສາອົບຮົມ ຫຼື ຖືກລົງໂທດທາງອາຍາຕາມແຕ່ກໍລະນີໜັກ ຫຼື ເບົາ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 46. ການຈັດຕັ້ງປະຕິບັດ

ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບບັນດາກົມ, ກອງ, ສະຖາບັນ, ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ, ນະຄອນ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ ແລະ ໜ້າທີ່ຂອງໃຜລາວຢ່າງເຂັ້ມງວດ ໂດຍຕ້ອງອີງໃສ່ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ລວມທັງນິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ຄວາມປອດໄພຂອງຜະລິດຕະພັນສັດທີ່ໄດ້ນໍາໃຊ້ແລ້ວ ເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດ.

ໃນກໍລະນີການເຄື່ອນໄຫວຈັດຕັ້ງປະຕິບັດດັ່ງກ່າວ ຫາກຂັດ ຫຼື ບໍ່ໄດ້ກວມລວມເອົາຫຼັກການພື້ນຖານທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງນີ້, ໃຫ້ຖືເອົາຂໍ້ຕົກລົງສະບັບນີ້ເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດ.

ມາດຕາ 47. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກຳນົດ ແລະ ກົດລະບຽບທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ສີຕາເຮັ່ງ ຣາຊະພົນ